# ດຳເນີນຊີວິດ ຕາມພຣະ ບັນຍັດ



ບົດຮຽນທີ 9 ສຳລັບເດືອນສິງຫາ ທີ 30, 2025





“ພະເຈົ້າຢາເວໄດ້ສັ່ງໂມເຊໃຫ້ບອກຊາວ
ອິດສະຣາເອນວ່າ, ພວກເຈົ້າໄດ້ເຫັນ
ດ້ວຍຕົນເອງແລ້ວວ່າ ເຮົາໄດ້ກ່າວກັບ
ພວກເຈົ້າອອກມາຈາກສະຫວັນ. ຢ່າ
ເຮັດຮູບພະເປັນເງິນເປັນຄຳໄວ້ຂາບໄຫວ້
ຄຽງຄູ່ເຮົາເດັດຂາດ” ’ ” ອພຍ 20:22, 23

ຫລັງຈາກປະກາດພຣະບັນຍັດສິບປະການ, ຜູ້ຄົນໄດ້ຮ້ອງຂໍໃຫ້ໂມເຊເປັນຄົນກາງລະຫວ່າງພວກເຂົາ ແລະ ພຣະເຈົ້າ (ອພຍ 20:19). ຫລັງຈາກນັ້ນເປັນຕົ້ນມາ, ພຣະເຈົ້າໄດ້ປະທານກົດຕ່າງໆໃຫ້ກັບໂມເຊ, ແລະ ລາວໄດ້ຖ່າຍທອດໃຫ້ກັບປະຊາຊົນ.

ກົດເຫລົ່ານີ້, ໄດ້ເອີ້ນວ່າ “ກົດດ້ານສິນລະທຳ,” ມີຈຸດປະສົງເພື່ອເປັນຫລັກການດຳລົງຊີວິດຂອງຊາວອິດສະຣາເອນ ແລະ ພວກເຮົາເຊັ່ນກັນ. (ໂດຍປັບໃຫ້ເຂົ້າກັບສະພາບຄວາມເປັນຈິງໃນປະຈຸບັນ).

ໂດຍສະຫລຸບແລ້ວ, ກົດເຫລົ່ານັ້ນແມ່ນການນຳເອົາພຣະບັນຍັດສິບປະການ ໄປປະຍຸກໃຊ້ໃນຊີວິດປະຈຳວັນ.







**ຈະດຳເນີນຊີວິດຕາມພຣະບັນຍັດໄດ້ແນວໃດ?:**

- ວິທີຈັດການກັບຄວາມຮຸນແຮງ (ອພຍ 21:1-32)
- ວິທີທີ່ຈະຢູ່ຮ່ວມກັນໃນສັງຄົມ (ອພຍ 21:33-23:19)
- ວິທີທີ່ຈະໄດ້ຮັບໄຊຊະນະ (ອພຍ 23:20-33)

**ວິທີທີ່ຈະເຂົ້າໃຈພຣະບັນຍັດ:**

- ກົດເກນແຫ່ງການແກ້ແຄ້ນ.
- ລາງວັນ ແລະ ການລົງໂທດ.




# ຈະດຳເນີນຊີວິດຕາມພຣະບັນຍັດ ໄດ້ແນວໃດ?



# ວິທີຈັດການກັບຄວາມຮຸນແຮງ

"ຜູ້ໃດກໍຕາມທຸບຕີຄົນໜຶ່ງໃຫ້ເຖິງຕາຍ ຈະຕ້ອງຮັບໂທດເຖິງຕາຍຄືກັນ" (ອພຍ 21:12)

## ກົດດ້ານສິນລະທຳ ເລີ່ມຕົ້ນໂດຍ 3 ປະເດັນສຳຄັນຂອງສັງຄົມຊາວເຮັບເຣີ:









1. ການເປັນຂ້າທາດ (ອພຍ. 21:2-11)
   - ທາດທີ່ເປັນຜູ້ຊາຍຈະໄດ້ຮັບການປົດປ່ອຍຫລັງຈາກ 7 ປີ.
   - ທາດຜູ້ຍິງຖ້າຍັງບໍ່ໄດ້ແຕ່ງງານ ຈະໄດ້ຮັບອິດສະຫລະ.
   - ຜູ້ຊາຍຖ້າເລືອກຈະເປັນທາດຕໍ່ໄປກໍ່ໄດ້.
2. ໂທດສຳລັບການປະຫານຊີວິດ (ອພຍ. 21:12-17)
   - ສຳລັບຜູ້ທີ່ຂ້າຄົນໂດຍເຈດຕະນາ
   - ສຳລັບຜູ້ທີ່ທຳຮ້າຍ ຫລື ສາບແຊ່ງພິດາມານດາຂອງຕົນ
   - ສຳລັບຜູ້ທີ່ລັກພາໂຕຄົນອື່ນ
3. ໂທດຂອງການທຳຮ້າຍ (ອພຍ. 21:18-32)
   - ຈະຕ້ອງຊົດໃຊ້ດ້ວຍເງິນ ຫລື ຊັບສິນ
   - ຖ້າມີການຕີກັນ ແລ້ວບັງເອີນໄປຖືກຜູ້ຍິງທີ່ຖືພາ ຈົນເກີດການແທ້ງບຸດ, ຜູ້ຕີນັ້ນຈະຕ້ອງຈ່າຍຄ່າຊົດເຊີຍຕາມທີ່ຜົວຂອງນາງຮຽກຮ້ອງ

ກົດໝາຍທັງໝົດນີ້ ມີໄວ້ເພື່ອຄວບຄຸມການລະເມີດ ແລະ ການກໍ່ຄວາມຮຸນແຮງລະຫວ່າງຜູ້ຄົນດ້ວຍກັນ.

# ວິທີທີ່ຈະຢູ່ຮ່ວມສັງຄົມ

“ຖ້າຊາຍຄົນໜຶ່ງຫລອກລວງຍິງສາວບໍລິສຸດ ທີ່ຍັງບໍ່ມີຄູ່ໝັ້ນ ລາວກໍຕ້ອງຈ່າຍຄ່າແຕ່ງດອງແກ່ນາງ ແລະ ຮັບນາງມາເປັນເມຍຂອງຕົນ” (ອພຍ 22:16 )



ພຣະເຈົ້າບໍ່ໄດ້ປ່ອຍໃຫ້ພວກເຮົາຢູ່ກັບກົດເກນ “ພື້ນຖານ” ແລະ ໃຫ້ພວກເຮົານຳເອົາໄປໃຊ້ຕາມຄວາມຄິດຂອງພວກເຮົາເອງ. ແຕ່ພຣະອົງຊົງມີຕົວຢ່າງທີ່ເປັນຮູບປະທຳ ເພື່ອໃຫ້ພວກເຮົາສາມາດນຳໄປປະຍຸກໃຊ້ໄດ້ຢ່າງຖືກຕ້ອງ.

ຕົວຢ່າງຂອງກົດເຫລົ່ານີ້ຍັງລວມໄປເຖິງ ການຖືກສັດທຳຮ້າຍ (ອພຍ. 21:35-36 ); ການຢືມ ແລະ ການເຊົ່າ (ອພຍ. 22:14-15 ); ຄວາມສຳພັນກ່ອນການແຕ່ງງານ (ອພຍ. 22:16 ), ....

ໃຫ້ຄວາມສຳຄັນເປັນພິເສດກັບການປົກປ້ອງຜູ້ທີ່ອ່ອນແອ ແລະ ດ້ອຍໂອກາດ, ແລະ ຈະບໍ່ມອບຄວາມອະຍຸຕິທຳໃຫ້ພວກເຂົາເຊັ່ນກັນ—ໝາຍຄວາມວ່າ: ບໍ່ບິດເບືອນຄວາມຍຸຕິທຳ ເພື່ອໃຫ້ເກີດຄວາມອະຍຸຕິທຳເພື່ອເອົາປຽບຄົນອ່ອນແອ ແລະ ດ້ອຍໂອກາດເຫລົ່ານັ້ນ (ອພຍ. 22:21-23; 23:2-3, 6).









ເນື່ອງຈາກວ່າ ພັນທະສັນຍານັ້ນແມ່ນລະຫວ່າງພຣະເຈົ້າ ແລະ ປະຊາຊົນຂອງພຣະອົງ, ກົດເຫລົ່ານີ້ຈຶ່ງລວມໄປເຖິງວິທີການເຄົາລົບ ແລະ ປະຕິບັດຕໍ່ພຣະອົງເຊັ່ນກັນ. ນອກຈາກການຮັກສາວັນສະບາໂຕແລ້ວ ຍັງມີພັນທະຜູກພັນທີ່ຈະຕ້ອງປະຕິບັດຕາມເທດສະການຕ່າງໆເຊິ່ງເປັນທີ່ເຕືອນໃຈພວກເຮົາ ເຖິງການຖືກປົດປ່ອຍຈາກຄວາມບາບ, ການປົກປ້ອງຄຸ້ມຄອງຈາກພຣະອົງ ແລະ ລວມໄປເຖິງອານາຄົດທີ່ຖ້າພວກເຮົາຢູ່.

# ຈະມີໄຊຊະນະໄດ້ຢ່າງໃດ

"ເຮົາຈະໃຊ້ເທວະດານຳໜ້າໄປ ເພື່ອປົກປັກຮັກສາພວກເຈົ້າໃນການເດີນທາງ ທັງຈະນຳພວກເຈົ້າໄປບ່ອນທີ່ເຮົາໄດ້ຈັດແຈງໄວ້" (ອພຍ 23:20)

ເຫດໃດພຣະເຈົ້າຈຶ່ງບໍ່ປະທານແຜ່ນດິນຂອງຊາວຄານາອານໃຫ້ແກ່ອັບຣາຮາມ? "ເພາະຄວາມຊົ່ວຮ້າຍຂອງຊາວອາໂມ ຍັງບໍ່ໜັກສົມຄວນ" (ປຖມກ. 15:16).

ຫລັງຈາກສີ່ສະຕະວັດແຫ່ງພຣະຄຸນ, ຊາວຄານາອານຍັງບໍ່ໄດ້ປ່ຽນແປງການດຳເນີນຊີວິດຂອງພວກເຂົາ. ແລະ ກໍຮອດເວລາແລ້ວທີ່ຈະຕ້ອງໄດ້ມອບແຜ່ນດິນນີ້ໃຫ້ກັບຊາວອິດສະຣາເອນ...ຢ່າງສັນຕິ! (ອພຍ. 13:17)

ຖ້າພຣະເຈົ້າຊົງນຳພວກເຂົາອອກມາໂດຍບໍ່ມີການຕໍ່ສູ້ກັບຊາວເອຢິບ, ບໍ່ໄດ້ແບ່ງທະເລອອກເປັນສອງຟາກ, ລ້ຽງພວກເຂົາດ້ວຍອາຫານຈາກສະຫວັນ, ແລະຊົງນຳພວກເຂົາໂດຍເທວະດາຂອງພຣະອົງ... ແລ້ວພຣະເຈົ້າຈະຊົງມອບດິນແດນຄານາອານໃຫ້ກັບພວກເຂົາ ໂດຍບໍ່ຕ້ອງຕໍ່ສູ້ຫຍັງເລີຍບໍ? ແບບນີ້ໄດ້ບໍ?










## ພຣະອົງບອກຊາວອິດສະຣາເອນວ່າຕ້ອງເຮັດຫຍັງ

- ຟັງພຣະສຸຣະສຽງຂອງພຣະອົງ ເພື່ອພຣະອົງຈະເປັນສັດຕູ ຕໍ່ສັດຕູຂອງພວກເຂົາ (23:21-22)
- ນະມັດສະການພຣະອົງເທົ່ານັ້ນ, ເພື່ອພຣະອົງຈະຂັບໄລ່ພະຍາໂລຄາຕ່າງໆອອກໄປຈາກພວກເຂົາ (23:24-26)
- ບໍ່ເຮັດສັນຍາກັບຊາວຄານາອານ ເພາະຈະເຮັດໃຫ້ພວກເຂົາຫັນໄປຈາກພຣະອົງ (23:32-33)

## ພຣະອົງບອກໃນສິ່ງທີ່ພຣະອົງຈະເຮັດ

- ພຣະອົງຈະສົ່ງທູດສະຫວັນເພື່ອປົກປ້ອງ (23:20)
- ທູດສະຫວັນຈະນຳໜ້າພວກເຂົາໄປ ແລະ ນຳໄປສູ່ດິນແດນຄານາອານ (23:23)
- ພຣະອົງຈະສົ່ງຄວາມຫວາດກົວໄປທີ່ເມືອງເຫລົ່ານັ້ນ(23:27)
- ພຣະອົງຈະເຮັດໃຫ້ສັດຕູຂອງພວກເຂົາເສຍຂວັນ(23:28)
- ພຣະອົງຈະຂັບໄລ່ພວກເຂົາອອກໄປເທື່ອລະໜ້ອຍ(23:29-30)
- ພຣະອົງຈະຊົງມອບພວກເຂົາໄວ້ ພາຍໃຕ້ຊາວອິດສະຣາເອນ(23:31)

“ຕະຫຼອດຍຸກສະໄໝທີ່ຜ່ານມາ ພຣະບັນຍັດຂອງພຣະ
ອົງນັ້ນໄດ້ຮັບການຮັກສາໄວ້ໃຫ້ເປັນມາດຕະຖານສູງສຸດ
ຂອງສິນລະທຳຂັ້ນ. ໜ້າທີ່ສຳຄັນໃນການຢູ່ຮ່ວມກັນໃນ
ສັງຄົມ ບໍ່ວ່າຈະເປັນທາງໃດທາງໜຶ່ງນັ້ນ ຈະມີຢູ່ໃນກົດ
ຕ່າງໆເຫລົ່ານີ້; ກົດເກນຕ່າງໆຂອງພຣະເຈົ້າແມ່ນຄວາມ
ໝັ້ນຄົງຂອງຊີວິດ, ຊັບສິນ, ສັນຕິສຸກ, ແລະ
ຄວາມສຸກ. ກົດເກນເຫລົ່ານີ້ປະທານໃຫ້ພວກເຮົາເພື່ອ
ຮັກສາຄວາມດີ ໃນປະຈຸບັນ ແລະ ຊີວິດນິຣັນດອນຂອງ
ພວກເຮົາ”

EGW (The Upward Look. October 7)




# ເຮົາຈະເຂົ້າໃຈກົດພຣະບັນຍັດຕ່າງໆ
# ໄດ້ແນວໃດ?



# ກົດເກນແຫ່ງການແກ້ແຄ້ນ

"ຕາແທນຕາ ແຂ້ວແທນແຂ້ວ, ມືແທນມື, ຕີນແທນຕີນ," (ອພຍ 21:24)

ຕອນທີ່ພຣະເຢຊູໄດ້ເທດສະໜາທີ່ພູເຂົາ, ພຣະອົງໄດ້ຍົກເລີກກົດແຫ່ງການແກ້ແຄ້ນ (ມທ. 5:38-42) ... ຫລືບໍ່ໄດ້ຍົກເລີກ?

ໃນວະລີ "ພວກທ່ານທັງຫລາຍໄດ້ຍິນຄຳວ່າ... ແຕ່ເຮົາບອກພວກທ່ານທັງຫລາຍວ່າ" ບໍ່ໄດ້ຍົກເລີກກົດໃດໆ (ພຣະເຢຊູຊົງໃຊ້ວະລີດຽວກັນກັບ "ຢ່າຂ້າຄົນ" ຫລື "ຢ່າລ່ວງປະເວນີ," ແຕ່ພຣະອົງບໍ່ເຄີຍຍົກເລີກ). ໃນຄວາມຈິງ ພຣະອົງຊົງຂະຫຍາຍຄວາມ, ເພື່ອໃຫ້ເຂົ້າໃຈໄດ້ງ່າຍຂຶ້ນ



ກົດແຫ່ງການແກ້ແຄ້ນ ບໍ່ເຄີຍມີເຈດຕະນາທີ່ບົ່ງບອກວ່າ ພວກເຮົາຈະຕ້ອງຕັດ, ຫລື ສູນເສຍຕາ ແລະ ມືຂອງພວກເຮົາໄປ ຖ້າພວກເຮົາທຳຮ້າຍຄົນອື່ນ. ແຕ່ມີຄວາມໝາຍ ໃຫ້ເຊົາການເຮັດສິ່ງເຫລົ່ານັ້ນ



ກົດນີ້ ກໍ່ເພື່ອ ປົກປ້ອງການແກ້ແຄ້ນ, ຍຸຕິການຄາດຕະກຳ ແລະ ການແກ້ແຄ້ນໂດຍທີ່ບໍ່ຮູ້ກົກປາຍສາເຫດ. ຜູ້ວ່າຄວາມຈະຕ້ອງໄດ້ປະເມີນຄ່າເສຍຫາຍ ຈາກນັ້ນຈຶ່ງກຳນົດຈ່າຍຄ່າຊົດເຊີຍທີ່ເໝາະສົມ. ແນວທາງການປະຕິບັດນີ້ໄດ້ເກີດຂຶ້ນ ເພື່ອປ້ອງກັນບໍ່ໃຫ້ຜູ້ຄົນນຳເອົາຄວາມຍຸຕິທຳມາຕັດສິນດ້ວຍຕົນເອງ; ຄວາມຍຸຕິທຳຈຳເປັນຕ້ອງໄດ້ເກີດຂຶ້ນ ແຕ່ຕ້ອງສອດຄ່ອງກັບກົດຂອງພຣະເຈົ້າ.

# ລາງວັນ ແລະ ການລົງໂທດ

"ຖ້າຜູ້ໃດບໍ່ໄດ້ມີເຈດຕະນາຂ້າເຂົາ ແຕ່ເຂົາຕາຍເພາະພຣະເຈົ້າຊົງອະນຸຍາດໃຫ້ເຂົາຕາຍ ຖ້າເປັນດັ່ງນັ້ນ ລາວກໍ່ສາມາດປົບໜີໄປບ່ອນທີ່ເຮົາກໍານົດໄວ້ໃຫ້ໄດ້" (ອພຍ 21:13 NIV)

ຄວາມປາຖະໜາທີ່ຈະແກ້ແຄ້ນຢັ່ງຮາກເລິກລົງໃນໂຕເຮົາ. ແລະ ເຮົາກໍ່ອາດຄິດວ່າມັນບໍ່ຍຸຕິທໍາສໍາລັບພວກເຮົາ ແລະຢາກຈະ: "ແກ້ແຄ້ນຫລາຍກວ່າທີ່ເຂົາໄດ້ເຮັດຕໍ່ພວກເຮົາ."



ພຣະເຢຊູໄດ້ຊົງສອນພວກເຮົາໃຫ້ເຮັດໃນສິ່ງທີ່ກົງກັນຂ້າມກັນ: ຕອບແທນຄວາມຊົ່ວ ໂດຍຄວາມດີ (ມທ. 5:44). ແລ້ວຄວາມຍຸຕິທໍາຢູ່ໃສ? ຄົນເຮັດຜິດຈະໄດ້ຮັບຄວາມຜິດແບບໃດ?

ພຣະເຈົ້າໄດ້ບອກພວກເຮົາວ່າ ການແກ້ແຄ້ນແມ່ນໜ້າທີ່ຂອງພຣະອົງ ເພາະທຸກໆການກະທໍາແມ່ນຖືກບັນທຶກໄວ້ໝົດແລ້ວ. (ໂຣມ. 12:19-21).





ເຖິງວ່າກົດພັນທະສັນຍາຈະມີການແກ້ແຄ້ນສ່ວນບຸກຄົນ, ແຕ່ກໍ່ຢູ່ພາຍໃຕ້ການສ້າງລະບົບຍຸຕິທໍາ ເພື່ອປົກປ້ອງການລະເມີດ (ອພຍ. 21:12-13, 22; 22:8-9).

ບໍ່ມີໃຜສາມາດເຮັດໜ້າທີ່ເປັນຜູ້ຕັດສິນຄວາມ ແລະ ຜູ້ປະຫານຊີວິດໄດ້ໃນຄະນະດຽວກັນ. ຖ້າການຕັດສິນວ່າຕ້ອງມີການລົງໂທດ ກໍຈະຕ້ອງລົງໂທດຜ່ານຂະບວນການຍຸຕິທໍາ ແລະ ພຣະຄຣິດຈະເປັນຜູ້ພິພາກສາສູງສຸດ.

“ໃນຖານະຜູ້ຊົງສ້າງ, ພຣະອົງຊົງປົກຄອງຢູ່ເໜືອສັບພະ
ທຸກສິ່ງທັງປວງ, ແລະ ພຣະອົງກໍ່ຊົງມີກົດຂອງພຣະອົງທີ່
ຄອບຄຸມໄປທົ່ວຈັກກະວານ. ການຮຽກຮ້ອງໃຫ້ສິ່ງທີ່ພຣະ
ອົງຊົງສ້າງນັ້ນເຊື່ອຟັງໂດຍບໍ່ປະຕິບັດນັ້ນ ຍ່ອມເທົ່າກັບ
ການປ່ອຍປະພວກເຂົາໃຫ້ພັງພິນາດ. ການບໍ່ລົງໂທດ
ການຝ່າຝືນກົດບັນຍັດຂອງພຣະອົງ ຍ່ອມເທົ່າກັບການ
ເຮັດໃຫ້ຈັກກະວານສັບສົນ. ກົດຂອງພຣະອົງແມ່ນເຄື່ອງ
ປ້ອງກັນຂອງພຣະເຈົ້າ ເພື່ອໃຫ້ມະນຸດບໍ່ເຮັດບາບ.
ດັ່ງນັ້ນພຣະປັນຍາອັນບໍ່ມີຂອບເຂດຂອງພຣະອົງ ຈຶ່ງເຮັດ
ໃຫ້ເຫັນເຖິງຄວາມຖືກຕ້ອງແລະຄວາມຍຸຕິທຳ ໄວ້ຕໍ່ໜ້າ
ມະນຸດສະເໝີ.”

**EGW ( The Signs of the Times , June 5, 1901)**